ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ ເລກທີ 060 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 16/01/2012

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍ
### ວ່າດ້ວຍການໂທລະຄົມມະນາຄົມ ສະບັບປັບປຸງ.

~~~~~~~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 25/ສພຊ, ລົງວັນທີ 21 ທັນວາ 2011 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍການໂທລະຄົມມະນາຄົມ ສະບັບປັບປຸງ;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 25/ຄປຈ, ລົງວັນທີ 03 ມັງກອນ 2012.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*__ມາດຕາ 1__* : ປະກາດໃຊ້ກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ ສະບັບປັບປຸງ.

*__ມາດຕາ 2__* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ.**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ຈູມມາລີ ໄຊຍະສອນ
~~~~~~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 25 /ສພຊ

# ມະຕິຕົກລົງ
ຂອງ
ສະພາແຫ່ງຊາດ ແຫ່ງ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ
ການໂທລະຄົມມະນາຄົມ ສະບັບປັບປຸງ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ ສະບັບປັບປຸງ ໃນວາລະກອງປະຊຸມຕອນເຊົ້າຂອງວັນທີ 21 ທັນວາ 2011

## ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1</u>. ຮັບຮອງເອົາ ກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ ສະບັບປັບປຸງ ດ້ວຍຄະແນນສຽງເຫັນດີ ເປັນສ່ວນຫຼາຍ.

<u>ມາດຕາ 2</u>. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 21 ທັນວາ 2011
ປະທານສະພາແຫ່ງຊາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------------

ສະພາແຫ່ງຊາດ

ເລກທີ 09 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 21 ທັນວາ 2011

# ກົດໝາຍ

# ວ່າດ້ວຍ ການໂທລະຄົມມະນາຄົມ (ສະບັບປັບປຸງ)

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ). ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ, ການຕິດຕາມ, ກວດກາ ການດຳເນີນທຸລະກິດໂທລະຄົມມະນາຄົມ, ຊັບພະຍາກອນໂທລະຄົມມະນາຄົມ, ມາດຕະຖານເຕັກນິກ, ການໃຫ້ ແລະ ໃຊ້ບໍລິການໂທລະຄົມມະນາຄົມ ເພື່ອໃຫ້ມີຄຸນນະພາບ, ທົ່ວເຖິງ, ມີຄວາມສະດວກ, ຍຸຕິທຳ, ພັດທະນາຢ່າງຕໍ່ເນື່ອງ ແລະ ທັນເປັນທັນສະໄໝ ແນໃສ່ຮັບປະກັນຄວາມໝັ້ນຄົງ, ຄວາມປອດໄພຂອງຊາດ ພ້ອມທັງສ້າງລາຍຮັບເຂົ້າງົບປະມານແຫ່ງລັດ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 2 (ໃໝ່). ການໂທລະຄົມມະນາຄົມ**

ການໂທລະຄົມມະນາຄົມ ແມ່ນ ການຕິດຕໍ່ສື່ສານດ້ວຍການສົ່ງ ແລະ ການຮັບຂໍ້ມູນຂ່າວສານ, ສຽງ, ຮູບພາບ, ຕົວເລກ, ຕົວອັກສອນ, ເຄື່ອງໝາຍໃດໜຶ່ງ ດ້ວຍລະບົບສາຍ, ລະບົບແສງ, ລະບົບຄື້ນຄວາມຖີ່, ລະບົບແມ່ເຫຼັກໄຟຟ້າ, ລະບົບອື່ນໃດໜຶ່ງ ຫຼື ຫຼາຍລະບົບລວມກັນ.

ມາດຕາ 3 (ປັບປຸງ). ການອະທິບາຍຄຳສັບ

**ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:**

1. **ເຄືອຂ່າຍໂທລະຄົມມະນາຄົມ ໝາຍເຖິງ** ລະບົບໂຄງລ່າງພື້ນຖານໂທລະຄົມມະນາຄົມ ຊຶ່ງປະກອບດ້ວຍລະບົບມີສາຍ ແລະ ບໍ່ມີສາຍ ຫຼື ທັງສອງລະບົບເຊື່ອມຕໍ່ເຂົ້າກັນ ລວມທັງອຸປະກອນທີ່ປະກອບເຂົ້າໃນການບໍລິການໂທລະຄົມມະນາຄົມ ໜຶ່ງປະເພດ ຫຼື ຫຼາຍປະເພດ;
2. **ຊັບພະຍາກອນໂທລະຄົມມະນາຄົມ ໝາຍເຖິງ** ຄື້ນຄວາມຖີ່, ເລກໝາຍໂທລະສັບ, ເລກໝາຍອິນເຕີເນັດ, ລະຫັດຊື່ອິນເຕີເນັດ, ຕຳແໜ່ງວົງໂຄຈອນດາວທຽມ ແລະ ໂຄງລ່າງ ພື້ນຖານໂທລະຄົມມະນາຄົມ;
3. **ອິນເຕີເນັດ ໝາຍເຖິງ** ການເຊື່ອມຕໍ່ລະບົບເຄືອຂ່າຍຄອມພິວເຕີໃນທົ່ວໂລກເຂົ້າກັນ ໂດຍຜ່ານເຄືອຂ່າຍໂທລະຄົມມະນາຄົມ ເພື່ອການສົ່ງ, ການຮັບ ແລະ ການແລກປ່ຽນຂໍ້ມູນ ຂ່າວສານ;
4. **ອຸປະກອນໂທລະຄົມມະນາຄົມ ໝາຍເຖິງ** ຈັກລວມໂທລະສັບ, ໜ່ວຍໂທລະສັບ, ເຄື່ອງສົ່ງ ແລະ ຮັບວິທະຍຸສື່ສານ, ເຄື່ອງຈັກໂທລະເລກ, ເຄື່ອງຈັກໂທລະສານ, ເຄື່ອງຄອມພິວເຕີ, ເຄື່ອງກຳເນີດໄຟຟ້າ, ເຄື່ອງໄຟຟ້າຫຼໍ່ລ້ຽງ ລວມທັງສາຍທອງ, ສາຍໂລຫະປະສົມ, ສາຍໃຍແສງ, ສາຍອາກາດ ຫຼື ວັດຖຸທີ່ນຳໃຊ້ເຂົ້າໃນການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ;
5. **ການເຊື່ອມຕໍ່ເຄືອຂ່າຍ ໝາຍເຖິງ** ການເຊື່ອມຕໍ່ລະຫວ່າງເຄືອຂ່າຍໂທລະຄົມມະນາຄົມ ຂອງຜູ້ໃຫ້ບໍລິການ ເພື່ອໃຫ້ຜູ້ໃຊ້ບໍລິການ ສາມາດຕິດຕໍ່ສື່ສານກັນໄດ້.

ມາດຕາ 4 (ປັບປຸງ). ນະໂຍບາຍຂອງລັດດ້ານໂທລະຄົມມະນາຄົມ

ລັດ ຊຸກຍູ້ສົ່ງເສີມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການກໍ່ສ້າງ, ການພັດທະນາ, ການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ຕາມປະເພດ ແລະ ອາຍຸການປະກອບກິດຈະການໂທລະຄົມມະນາຄົມ.

ລັດ ສົ່ງເສີມຜູ້ໃຫ້ບໍລິການໂທລະຄົມມະນາຄົມ ແຂ່ງຂັນກັນປະກອບກິດຈະການໂທລະຄົມມະນາຄົມ ຢ່າງເປັນທຳ ແລະ ຕ້ອງປະຕິບັດຕາມລະບຽບການແຂ່ງຂັນທາງການຄ້າຂອງ ສປປ ລາວ ຢ່າງເຂັ້ມງວດ.

ລັດ ຊຸກຍູ້ສົ່ງເສີມຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຂະຫຍາຍໂຄງລ່າງພື້ນຖານທີ່ຈຳເປັນ ໂດຍໃຫ້ຫັນມານຳໃຊ້ລະບົບສາຍສົ່ງ ແລະ ສູນຄຸ້ມຄອງຄວາມປອດໄພແຫ່ງຊາດ ຕາມຄວາມເໝາະສົມ ເພື່ອໃຫ້ປະຊາຊົນຢູ່ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກສາມາດໃຊ້ບໍລິການຢ່າງທົ່ວເຖິງ ດ້ວຍຄ່າບໍລິການທີ່ສົມເຫດສົມຜົນ.

ລັດ ຊຸກຍູ້ສົ່ງເສີມຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ມີສ່ວນຮ່ວມໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ວປ່ອງຊີນ ຕ້ານ ແລະ ສະກັດກັ້ນ ກົນອຸບາຍມ້າງເພຂອງຜູ້ບໍ່ຫວັງດີ ຕໍ່ປະເທດຊາດ.

**ມາດຕາ 5 (ໃໝ່). ຫຼັກການກ່ຽວກັບວຽກງານໂທລະຄົມມະນາຄົມ**

ວຽກງານໂທລະຄົມມະນາຄົມ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນ ການພັດທະນາວຽກງານໂທລະຄົມມະນາຄົມ ໃຫ້ສອດຄ່ອງກັບແນວທາງນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງລັດ ແລະ ແຜນຍຸດທະສາດພັດທະນາຂະແໜງການ;
2. ຮັບປະກັນ ຄວາມສະເໝີພາບຕໍ່ໜ້າກົດໝາຍ, ບໍ່ຈຳແນກປະຕິບັດ, ຄວາມເປັນເອກະລາດຂອງອົງການຄຸ້ມຄອງໂທລະຄົມມະນາຄົມກັບຜູ້ໃຫ້ບໍລິການໂທລະຄົມມະນາຄົມຕາມລະບຽບກົດໝາຍ;
3. ຮັບປະກັນ ການຈັດສັນ ແລະ ການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ຢ່າງພາວະວິໄສ, ທັນເວລາ ແລະ ໂປ່ງໃສ; ເປີດເຜີຍຄື້ນຄວາມຖີ່ ທີ່ໄດ້ຈັດສັນແລ້ວ, ຍົກເວັ້ນລາຍລະອຽດຂອງຄື້ນຄວາມຖີ່ ທີ່ໄດ້ຈັດສັນສຳລັບການນຳໃຊ້ສະເພາະໃດໜຶ່ງຂອງລັດຖະບານ;
4. ຮັບປະກັນ ຄວາມລັບຂອງລັດ, ທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ຄວາມໂປ່ງໃສ ແລະ ຄວາມຍຸຕິທຳ;
5. ຮັບປະກັນ ຕາມມາດຕະຖານເຕັກນິກ, ເຊື່ອມຕໍ່ເຂົ້າກັບເຄືອຂ່າຍໂທລະຄົມມະນາຄົມຂອງພາກພື້ນ ແລະ ສາກົນ, ການບໍລິການທີ່ສະດວກ, ວ່ອງໄວ ແລະ ມີຄຸນນະພາບ;
6. ປົກປ້ອງສິດ ແລະ ຜົນປະໂຫຍດ ທີ່ຖືກຕ້ອງຕາມກົດໝາຍຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ ໂທລະຄົມມະນາຄົມ;
7. ຮັບປະກັນ ຄວາມສະຫງົບ ແລະ ການປົກປັກຮັກສາສິ່ງແວດລ້ອມ ແລະ ຮີດຄອງປະເພນີອັນດີງາມຂອງຊາດ.

**ມາດຕາ 6 (ໃໝ່). ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບວຽກງານໂທລະຄົມມະນາຄົມ ຢູ່ ສປປ ລາວ.

**ມາດຕາ 7 (ປັບປຸງ). ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຄຸ້ມຄອງ ແລະ ພັດທະນາໂທລະຄົມມະນາຄົມ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ ແລະ ການພັດທະນາໂຄງລ່າງພື້ນຖານ, ການປະສານງານໃນການນຳໃຊ້ຊັບພະຍາກອນ, ມາດຕະຖານເຕັກນິກ, ການຄ້າ ແລະ ການບໍລິການດ້ານໂທລະຄົມມະນາຄົມ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

# ພາກທີ II
# ຊັບພະຍາກອນໂທລະຄົມມະນາຄົມ
## ໝວດທີ 1
## ຄື້ນຄວາມຖີ່

**ມາດຕາ 8 (ໃໝ່). ຄື້ນຄວາມຖີ່**

ຄື້ນຄວາມຖີ່ ແມ່ນ ການກະຈາຍຄື້ນແມ່ເຫຼັກໄຟຟ້າ ໃນຍ່ານຄວາມຖີ່ ສາມ ກິໂລເຮີດ ເຖິງ ສາມຮ້ອຍ ຈີກາເຮີດ ເພື່ອນຳໃຊ້ເຂົ້າໃນການໂທລະຄົມມະນາຄົມ.

**ມາດຕາ 9 (ໃໝ່). ການນຳໃຊ້ຄື້ນຄວາມຖີ່**

ການຄຸ້ມຄອງ, ບໍລິຫານ, ຈັດສັນ, ແບ່ງປັນ ແລະ ເກັບຄືນ ຄື້ນຄວາມຖີ່ ທັງໝົດ ຢູ່ ສປປ ລາວ ເປັນຄວາມຮັບຜິດຊອບຂອງລັດ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບກົດໝາຍ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳໃຊ້ຄື້ນຄວາມຖີ່ ຕ້ອງໄດ້ຮັບອະນຸຍາດສຳປະທານຈາກລັດ.

ໃບສຳປະທານນຳໃຊ້ຄື້ນຄວາມຖີ່ ເປັນສິດສະເພາະຂອງຜູ້ໄດ້ຮັບອະນຸຍາດ, ການໂອນໃຫ້ຜູ້ອື່ນຮ່ວມນຳໃຊ້ຄື້ນຄວາມຖີ່ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ.

ການນຳໃຊ້ຄື້ນຄວາມຖີ່ ແລະ ອຸປະກອນວິທະຍຸ ຄົງທີ່ ແລະ ເຄື່ອນທີ່ ເຊັ່ນ ຢູ່ ສຳນັກງານ, ນຳລົດ, ເຮືອ, ເຮືອບິນ ຂອງ ສປປ ລາວ ແລະ ຂອງຕ່າງປະເທດ ເມື່ອຜ່ານດິນແດນຂອງ ສປປ ລາວ ຕ້ອງປະຕິບັດ ຕາມລະບຽບກົດໝາຍ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 10 (ໃໝ່). ການລົບກວນຂອງຄື້ນຄວາມຖີ່**

ການກະຈາຍຄື້ນຄວາມຖີ່ໃດໜຶ່ງ ທີ່ມີລະດັບຄວາມຖີ່ ແລະ ຄວາມແຮງຂອງກຳລັງສົ່ງ ເທົ່າກັນ ຫຼື ໃກ້ຄຽງກັນນັ້ນ ພາໃຫ້ເກີດມີການລົບກວນກັນ ລະຫວ່າງ ສະຖານນີວິທະຍຸ, ສະຖານນີໂທລະພາບ ແລະ ສະຖານນີກະຈາຍຄື້ນຄວາມຖີ່ອື່ນ ພາຍໃນປະເທດດ້ວຍກັນ ແລະ ພາຍໃນກັບຕ່າງປະເທດ.

**ມາດຕາ 11 (ໃໝ່). ຄ່ານຳໃຊ້ຄື້ນຄວາມຖີ່**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ຄື້ນຄວາມຖີ່ ລ້ວນແຕ່ໄດ້ເສັຍຄ່າ ຍົກເວັ້ນການນຳໃຊ້ເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສະຖານທູດ, ການຈັດຕັ້ງສາກົນ, ວຽກງານສຸກເສີນ ແລະ ວຽກງານຮັບໃຊ້ສະເພາະຂອງລັດ ຕາມລະບຽບກົດໝາຍ.

## ໝວດທີ 2
## ເລກໝາຍໂທລະສັບ, ເລກໝາຍອິນເຕີເນັດ ແລະ ລະຫັດຊື່ອິນເຕີເນັດ

**ມາດຕາ 12 (ໃໝ່). ເລກໝາຍໂທລະສັບ, ເລກໝາຍອິນເຕີເນັດ ແລະ ລະຫັດຊື່ອິນເຕີເນັດ**

ເລກໝາຍໂທລະສັບ ແລະ ເລກໝາຍອິນເຕີເນັດ ແມ່ນ ຕົວເລກ, ຕົວອັກສອນ ຫຼື ເຄື່ອງໝາຍທີ່ບົ່ງບອກເຖິງເຄືອຂ່າຍໂທລະຄົມມະນາຄົມ, ເຄືອຂ່າຍອິນເຕີເນັດ ແລະ ອຸປະກອນ ຕົ້ນທາງ ຫຼື ປາຍທາງ ເພື່ອການສື່ສານ.

ລະຫັດຊື່ອິນເຕີເນັດ ແມ່ນ ຊື່ ຫຼື ຕົວອັກສອນຫຍໍ້ ທີ່ໄດ້ກຳນົດໃຫ້ສະເພາະແຕ່ລະບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໃຊ້.

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ສ້າງແຜນ, ບໍລິຫານ, ຈັດສັນ, ແບ່ງປັນ ແລະ ຮຽກເກັບຄືນ ເລກໝາຍໂທລະສັບ, ເລກໝາຍອິນເຕີເນັດ ແລະ ລະຫັດຊື່ອິນເຕີເນັດ.

**ມາດຕາ 13 (ໃໝ່). ການຈົດທະບຽນເລກໝາຍໂທລະສັບ, ເລກໝາຍອິນເຕີເນັດ ແລະ ລະຫັດຊື່ອິນເຕີເນັດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳໃຊ້ເລກໝາຍໂທລະສັບ, ເລກໝາຍອິນເຕີເນັດ ແລະ ລະຫັດຊື່ອິນເຕີເນັດ ຕ້ອງໄປຈົດທະບຽນ ຢູ່ບ່ອນໃຫ້ບໍລິການໂທລະຄົມມະນາຄົມ ຫຼື ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

## ໝວດທີ 3
## ຕຳແໜ່ງວົງໂຄຈອນດາວທຽມ ແລະ ໂຄງລ່າງພື້ນຖານໂທລະຄົມມະນາຄົມ

**ມາດຕາ 14 (ໃໝ່). ຕຳແໜ່ງວົງໂຄຈອນດາວທຽມ**

ຕຳແໜ່ງວົງໂຄຈອນດາວທຽມ ແມ່ນ ບ່ອນວາງຂອງໜ່ວຍດາວທຽມທີ່ເຄື່ອນໝູນຕາມວົງໂຄຈອນ ຢູ່ ໃນຊ່ວງອາວະກາດ ແລະ ມີຄວາມສຳຄັນຕໍ່ການໂທລະຄົມມະນາຄົມ, ວຽກງານອຸຕຸນິຍົມວິທະຍາ, ວຽກງານສຳຫຼວດຊັບພະຍາກອນທຳມະຊາດ ແລະ ວຽກງານອື່ນໆ.

ການນຳໃຊ້ຕຳແໜ່ງວົງໂຄຈອນດາວທຽມ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 15 (ໃໝ່). ໂຄງລ່າງພື້ນຖານໂທລະຄົມມະນາຄົມ**

ໂຄງລ່າງພື້ນຖານໂທລະຄົມມະນາຄົມ ແມ່ນ ອາຄານ, ສິ່ງປຸກສ້າງພ້ອມດ້ວຍອຸປະກອນ ແລະ ສາຍສົ່ງສັນຍານ ເພື່ອຊ່ວຍໝູນໃຫ້ແກ່ການບໍລິການເຄືອຂ່າຍໂທລະຄົມມະນາຄົມ ເຊັ່ນ ທໍ່ໃສ່ສາຍພື້ນດິນ, ເສົາເບັ່ງສາຍ, ເສົາຮັບສົ່ງສັນຍານ, ສາຍອາກາດ, ສາຍໃຍແສງ, ສາຍທອງແດງ, ສາຍໂລຫະປະສົມ, ໝໍ້ແບ່ງໄຟຟ້າ.

## ພາກທີ III
## ມາດຕະຖານເຕັກນິກ ແລະ ຄຸນນະພາບ

**ມາດຕາ 16 (ໃໝ່). ການກຳນົດມາດຕະຖານເຕັກນິກ ແລະ ຄຸນນະພາບ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ກຳນົດມາດຕະຖານເຕັກນິກຂອງອຸປະກອນໂທລະຄົມມະນາຄົມ, ເຄືອຂ່າຍໂທລະຄົມມະນາຄົມ ແລະ ຄຸນນະພາບ ຂອງການບໍລິການໂທລະຄົມມະນາຄົມ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍ ມາດຕະຖານ, ມາດຕະຖານຂອງສາກົນ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 17 (ໃໝ່). ການຢັ້ງຢືນ ແລະ ຮັບຮອງ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ຢັ້ງຢືນ ແລະ ຮັບຮອງມາດຕະຖານເຕັກນິກ, ຄຸນນະພາບຂອງອຸປະກອນໂທລະຄົມມະນາຄົມ ທີ່ຜະລິດ ຢູ່ ພາຍໃນປະເທດ ແລະ ນຳເຂົ້າຈາກຕ່າງປະເທດ ລວມທັງເຄືອຂ່າຍໂທລະຄົມມະນາຄົມ ທີ່ຕິດຕັ້ງ ຢູ່ ສປປ ລາວ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍ ມາດຕະຖານ, ມາດຕະຖານຂອງສາກົນ, ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ເຊັ່ນ:

1. ມີຄວາມປອດໄພຕໍ່ຜູ້ຊົມໃຊ້;
2. ບໍ່ທຳລາຍສະພາບແວດລ້ອມ;
3. ບໍ່ເປັນອັນຕະລາຍຕໍ່ເຄືອຂ່າຍໂທລະຄົມມະນາຄົມ;
4. ຮັບຮອງໄດ້ກັບເຄືອຂ່າຍໂທລະຄົມມະນາຄົມ ຢູ່ ສປປ ລາວ.

**ມາດຕາ 18 (ໃໝ່). ການນຳເຂົ້າອຸປະກອນໂທລະຄົມມະນາຄົມ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຜູ້ຄຸ້ມຄອງການນຳເຂົ້າ ອຸປະກອນໂທລະຄົມມະນາຄົມ ທີ່ມີລະດັບເຕັກນິກສູງ.

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຄົ້ນຄວ້າ, ກຳນົດປະເພດອຸປະກອນໂທລະຄົມມະນາຄົມ ທີ່ຈຳເປັນຕ້ອງມີການຄຸ້ມຄອງ.

ສຳລັບໜ່ວຍໂທລະສັບມືຖື ແລະ ຄອມພິວເຕີ ຕ້ອງໃຫ້ມີລາຍການ ແລະ ສາມາດນຳໃຊ້ເນື້ອໃນເປັນ ພາສາລາວ.

## ພາກທີ IV
## ການເຊື່ອມຕໍ່ເຄືອຂ່າຍ ແລະ ການນຳໃຊ້ໂຄງລ່າງພື້ນຖານໂທລະຄົມມະນາຄົມ

**ມາດຕາ 19 (ໃໝ່). ການເຊື່ອມຕໍ່ເຄືອຂ່າຍ**

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ມີສິດສະເໜີຂໍເຊື່ອມຕໍ່ເຄືອຂ່າຍຂອງຕົນ ເຂົ້າກັບເຄືອຂ່າຍ ຫຼື ການບໍລິການໂທລະຄົມມະນາຄົມຂອງຜູ້ອື່ນ, ພ້ອມກັນນັ້ນ ກໍມີພັນທະໃຫ້ຜູ້ອື່ນເຊື່ອມຕໍ່ເຂົ້າກັບເຄືອຂ່າຍ ຫຼື ການບໍລິການຂອງຕົນ ບົນຫຼັກການສະເໝີພາບ ແລະ ຕ້ອງສະໜອງຂໍ້ມູນການເຊື່ອມຕໍ່ເຄືອຂ່າຍ ແລະ ຕ້ອງເປີດເຜີຍສັນຍາການເຊື່ອມຕໍ່ເຄືອຂ່າຍຂອງຕົນ.

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຕ້ອງຮັບປະກັນເງື່ອນໄຂທາງດ້ານເຕັກນິກ ກ່ຽວກັບການເຊື່ອມຕໍ່ ເຊັ່ນ ປະຕິບັດຕາມມາດຕະຖານດ້ານການເຊື່ອມຕໍ່ເຄືອຂ່າຍໂທລະຄົມມະນາຄົມ ທີ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກຳນົດ ແລະ ຕ້ອງຮັບປະກັນຄວາມປອດໄພ ຂອງເຄືອຂ່າຍ.

**ມາດຕາ 20 (ໃໝ່). ການນຳໃຊ້ໂຄງລ່າງພື້ນຖານ**

ຜູ້ໃຫ້ບໍລິການ ຕ້ອງນຳໃຊ້ໂຄງລ່າງພື້ນຖານໂທລະຄົມມະນາຄົມຮ່ວມກັນ ໂດຍບໍ່ໃຫ້ມີການຈຳແນກທາງດ້ານເງື່ອນໄຂ, ຄຸນນະພາບ ແລະ ການບໍລິການ ບົນຫຼັກການຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ເພື່ອຫຼີກເວັ້ນການລົງທຶນຊໍ້າຊ້ອນ.

**ມາດຕາ 21 (ໃໝ່). ການຄິດໄລ່ຄ່າເຊື່ອມຕໍ່ ແລະ ນຳໃຊ້ໂຄງລ່າງພື້ນຖານ**

ການຄິດໄລ່ລາຄາຄ່າເຊື່ອມຕໍ່ ແລະ ຄ່ານຳໃຊ້ໂຄງລ່າງພື້ນຖານໂທລະຄົມມະນາຄົມຮ່ວມກັນ ຕ້ອງປະຕິບັດຕາມຫຼັກການໂປ່ງໃສ, ສະເໝີພາບ, ບໍ່ຈຳແນກ, ອີງໃສ່ຕົ້ນທຶນການໃຊ້ຈ່າຍຕົວຈິງ ແລະ ອີງຕາມການຕົກລົງເປັນເອກະພາບກັນລະຫວ່າງຜູ້ໃຫ້ບໍລິການໂທລະຄົມມະນາຄົມດ້ວຍກັນ.

# ພາກທີ V

# ການປະກອບກິດຈະການໂທລະຄົມມະນາຄົມ

## ໝວດທີ 1

## ປະເພດ ແລະ ອາຍຸການ ຂອງການປະກອບກິດຈະການໂທລະຄົມມະນາຄົມ

**ມາດຕາ 22 (ໃໝ່). ປະເພດການປະກອບກິດຈະການໂທລະຄົມມະນາຄົມ**

ການປະກອບກິດຈະການໂທລະຄົມມະນາຄົມ ຢູ່ ສປປ ລາວ ມີ ສີ່ ປະເພດ ຄື:

1. ປະເພດ I: ການບໍລິການເຄືອຂ່າຍ ແລະ ສະໜອງການບໍລິການໂທລະຄົມມະນາຄົມ;
2. ປະເພດ II: ການສະໜອງການບໍລິການໂທລະຄົມມະນາຄົມສຳລັບຜູ້ທີ່ບໍ່ມີເຄືອຂ່າຍເປັນຂອງຕົນເອງ, ອິນເຕີເນັດ, ລະຫັດອິນເຕີເນັດ, ການເຊື່ອມຕໍ່ອິນເຕີເນັດ ແລະ ການບໍລິການເສີມ;
3. ປະເພດ III: ການບໍລິການທີ່ປຶກສາ, ຕິດຕັ້ງ, ສ້ອມແປງ, ສົ່ງອອກ, ນຳເຂົ້າ, ຜະລິດ ແລະ ຈຳໜ່າຍອຸປະກອນໂທລະຄົມມະນາຄົມ;
4. ປະເພດ IV: ການຕິດຕັ້ງເຄືອຂ່າຍໂທລະຄົມມະນາຄົມ ທີ່ໃຊ້ສະເພາະຕົນເອງເທົ່ານັ້ນ.

**ມາດຕາ 23 (ໃໝ່). ອາຍຸການຂອງແຕ່ລະປະເພດ**

ອາຍຸການຂອງການປະກອບກິດຈະການໂທລະຄົມມະນາຄົມ ແຕ່ລະປະເພດ ມີ ດັ່ງນີ້:

1. ປະເພດ I ມີອາຍຸ 15 ປີ;
2. ປະເພດ II ມີອາຍຸ 10 ປີ;
3. ປະເພດ III ມີອາຍຸ 5 ປີ;
4. ປະເພດ IV ມີອາຍຸ 3 ປີ.

ຜູ້ໄດ້ຮັບການອະນຸຍາດປະກອບກິດຈະການແຕ່ລະປະເພດ ຕ້ອງຈ່າຍຄ່າທຳນຽມການອະນຸຍາດທຸກໆປີ ແລະ ສາມາດສະເໜີຂໍຕໍ່ອາຍຸການຂອງການປະກອບກິດຈະການໂທລະຄົມມະນາຄົມໄດ້ນຳ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກ່ອນວັນໝົດອາຍຸ ຫົກ ເດືອນ.

## ໝວດທີ 2
## ການສ້າງຕັ້ງວິສາຫະກິດໂທລະຄົມມະນາຄົມ

**ມາດຕາ 24 (ປັບປຸງ). ການຂໍອະນຸຍາດສ້າງຕັ້ງວິສາຫະກິດໂທລະຄົມມະນາຄົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງວິສາຫະກິດໂທລະຄົມມະນາຄົມ ຕ້ອງຍື່ນຄຳຮ້ອງຂໍສ້າງຕັ້ງ ແລະ ຂຶ້ນທະບຽນຕໍ່ຂະແໜງການທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍ ວິສາຫະກິດ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງຂອງ ສປປ ລາວ.

**ການປະກອບກິດຈະການໂທລະຄົມມະນາຄົມ ທີ່ຕ້ອງໄດ້ຮັບການອະນຸຍາດຈາກ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີ ດັ່ງນີ້:**

1. ການບໍລິການເຄືອຂ່າຍ ແລະ ສະໜອງການບໍລິການໂທລະຄົມມະນາຄົມ;
2. ການສະໜອງບໍລິການໂທລະຄົມມະນາຄົມ ສຳລັບຜູ້ທີ່ບໍ່ມີເຄືອຂ່າຍເປັນຂອງຕົນເອງ;
3. ການຕິດຕັ້ງເຄືອຂ່າຍໂທລະຄົມມະນາຄົມ ທີ່ໃຊ້ສະເພາະຕົນເອງເທົ່ານັ້ນ.

**ການປະກອບກິດຈະການໂທລະຄົມມະນາຄົມ ທີ່ຕ້ອງໄດ້ຮັບການອະນຸຍາດຈາກ ພະແນກ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນ ມີ ດັ່ງນີ້:**

1. ການສະໜອງບໍລິການ ອິນເຕີເນັດ, ລະຫັດອິນເຕີເນັດ, ການເຊື່ອມຕໍ່ອິນເຕີເນັດ ແລະ ການບໍລິການເສີມ;
2. ການບໍລິການທີ່ປຶກສາ, ຕິດຕັ້ງ, ສ້ອມແປງ, ສົ່ງອອກ, ນຳເຂົ້າ, ຜະລິດ ແລະ ຈຳໜ່າຍ ອຸປະກອນໂທລະຄົມມະນາຄົມ.

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຄົ້ນຄວ້າວາງລະບຽບການພ້ອມທັງເຜີຍແຜ່ເງື່ອນໄຂ ແລະ ຂັ້ນຕອນຂອງການຂໍສ້າງຕັ້ງວິສາຫະກິດໂທລະຄົມມະນາຄົມໃນຂະແໜງການທີ່ກ່າວມາຂ້າງເທິງນີ້. ຂະແໜງການທີ່ພິຈາລະນາຄຳຮ້ອງດັ່ງກ່າວ ຕ້ອງໃຫ້ເຫດຜົນ ຢ່າງເປັນລາຍລັກອັກສອນແກ່ຜູ້ຮ້ອງຂໍ ໃນກໍລະນີທີ່ປະຕິເສດຄຳຮ້ອງດັ່ງກ່າວ.

**ມາດຕາ 25 (ໃໝ່). ການສຳເນົາສັນຍາ**

ຜູ້ໄດ້ຮັບອະນຸຍາດປະກອບກິດຈະການປະເພດໃດໜຶ່ງ ຕາມມາດຕາ 22 ຂອງກົດໝາຍສະບັບນີ້ ຕ້ອງສົ່ງສຳເນົາສັນຍາຕ່າງໆ ທີ່ຕົນເຂົ້າຮ່ວມໃຫ້ແກ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

# ພາກທີ VI
# ສິດ, ພັນທະຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ

**ມາດຕາ 26 (ປັບປຸງ). ສິດ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ**

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ມີ ສິດ ດັ່ງນີ້:

1. ສະເໜີ ຕໍ່ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການນຳໃຊ້ສະຖານທີ່, ທີ່ດິນ, ຖະໜົນ, ຮ່ອງລະບາຍນ້ຳ, ອາຄານ, ສິ່ງກໍ່ສ້າງ ແລະ ອື່ນໆ ໂດຍສອດຄ່ອງກັບລະບຽບກົດໝາຍ;
2. ສະເໜີອັດຕາຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ສອດຄ່ອງກັບສະພາບເສດຖະກິດ-ສັງຄົມ ໃນແຕ່ລະໄລຍະຕໍ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເພື່ອພິຈາລະນາ;
3. ໂຈະການບໍລິການຊົ່ວຄາວ ຫຼື ຍາວນານຕໍ່ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ໃນກໍລະນີ ລຸ່ມນີ້:
   - ບໍ່ຊຳລະຄ່າທຳນຽມບໍລິການຕາມປົກກະຕິ ພາຍຫຼັງທີ່ມີການກ່າວເຕືອນແລ້ວ;
   - ຕໍ່ພວງໂທລະສັບຂອງຕົນໃຫ້ຜູ້ອື່ນນຳໃຊ້ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ລະເມີດກົດໝາຍສະບັບນີ້ ແລະ ລະບຽບການໂທລະຄົມມະນາຄົມອື່ນໆ;
4. ຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມຂອງຕົນ;
5. ຜະລິດ, ສົ່ງອອກ, ນຳເຂົ້າ, ຈຳໜ່າຍ ແລະ ຕິດຕັ້ງ ອຸປະກອນໂທລະຄົມມະນາຄົມ;
6. ສະເໜີຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດ ກ່ຽວກັບການເຊື່ອມຕໍ່ເຄືອຂ່າຍ, ການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ, ຄຸນນະພາບ ແລະ ມາດຕະຖານຂອງການບໍລິການ;
7. ໃຫ້ບຸລິມະສິດໃນການສະໜອງການບໍລິການໂທລະຄົມມະນາຄົມ ແກ່ອົງການຈັດຕັ້ງຂອງລັດ;
8. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 27 (ປັບປຸງ). ພັນທະ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ**

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ມີ ພັນທະ ດັ່ງນີ້:

1. ປະຕິບັດລະບຽບກົດໝາຍ ກ່ຽວກັບໂທລະຄົມມະນາຄົມ ຢ່າງເຂັ້ມງວດ;
2. ຮັບປະກັນ ການເຊື່ອມຕໍ່, ການຈັດສັນລະບົບສັນຍານ, ເຄືອຂ່າຍຂອງຕົນເຂົ້າກັບບັນດາຜູ້ໃຫ້ບໍລິການ ໂທລະຄົມມະນາຄົມລາຍອື່ນ;
3. ຮັບປະກັນການໃຫ້ບໍລິການຢ່າງທົ່ວເຖິງ, ມີຄຸນນະພາບ, ມີຄວາມສະດວກ, ວ່ອງໄວ ແລະ ຍຸຕິທຳ;

4. ມີແຜນການປ້ອງກັນ ເພື່ອຟື້ນຟູເຄືອຂ່າຍໂທລະຄົມມະນາຄົມໃນກໍລະນີເກີດໄພພິບັດ, ວິກິດການ ຫຼື ພາວະສຸກເສີນ;
5. ປະຕິບັດລະບຽບການດ້ານບັນຊີການເງິນ, ສະຖິຕິ ແລະ ລະບອບລາຍງານ;
6. ເສຍຄ່ານໍາໃຊ້ຊັບພະຍາກອນໂທລະຄົມມະນາຄົມ;
7. ຢູ່ພາຍໃຕ້ການກວດກາຂອງຂະແໜງການທີ່ກ່ຽວຂ້ອງ;
8. ແກ້ໄຂຄໍາສະເໜີຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ ກ່ຽວກັບຄຸນນະພາບ ແລະ ມາດຕະຖານ ຂອງການບໍລິການ;
9. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນ ຕໍ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຢ່າງເປັນປົກກະຕິ;
10. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

ມາດຕາ 28 (ປັບປຸງ). **ສິດ ຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ**

ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ມີ ສິດ ດັ່ງນີ້:

1. ໄດ້ຮັບການສະໜອງການບໍລິການຢ່າງມີຄຸນນະພາບ, ສະດວກ, ວ່ອງໄວ ແລະ ຍຸຕິທໍາ;
2. ໃຫ້ການບໍລິການໂທລະຄົມມະນາຄົມ ແກ່ຜູ້ໃຊ້ບໍລິການຜູ້ອື່ນອີກຕໍ່ໜຶ່ງ ຕາມການອະນຸຍາດຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
3. ສະເໜີຕໍ່ຜູ້ໃຫ້ການບໍລິການ ຫຼື ອົງການທີ່ກ່ຽວຂ້ອງຂອງລັດ ເພື່ອປັບປຸງລະບຽບການ, ກວດກາ ການເກັບຄ່າທໍານຽມ ແລະ ຄ່າບໍລິການ;
4. ໄດ້ຮັບການສະໜອງຂໍ້ມູນ ກ່ຽວກັບການບໍລິການ, ຄ່າບໍລິການ, ຄຸນນະພາບຂອງການບໍລິການ;
5. ປະຕິບັດສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

ມາດຕາ 29 (ປັບປຸງ). **ພັນທະ ຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ**

ຜູ້ໃຊ້ການບໍລິການໂທລະຄົມມະນາຄົມ ມີ ພັນທະ ດັ່ງນີ້:

1. ປະຕິບັດລະບຽບການດ້ານເຕັກນິກ ໃນການນໍາໃຊ້ອຸປະກອນໂທລະຄົມມະນາຄົມ ແລະ ລະບຽບການອື່ນ ທີ່ອົງການກ່ຽວຂ້ອງໄດ້ວາງອອກ;
2. ຊໍາລະຄ່າທໍານຽມ ແລະ ຄ່າບໍລິການຢ່າງເປັນປົກກະຕິ;
3. ຢູ່ພາຍໃຕ້ການກວດກາຂອງຂະແໜງການທີ່ກ່ຽວຂ້ອງ;
4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

# ພາກທີ VII
# ກອງທຶນພັດທະນາໂທລະຄົມມະນາຄົມ

**ມາດຕາ 30 (ປັບປຸງ). ກອງທຶນພັດທະນາໂທລະຄົມມະນາຄົມ**

ລັດ ອະນຸຍາດໃຫ້ສ້າງຕັ້ງກອງທຶນພັດທະນາໂທລະຄົມມະນາຄົມ ເພື່ອພັດທະນາໂທລະຄົມມະນາຄົມ ຂອງ ສປປ ລາວ ໃຫ້ຂະຫຍາຍຕົວ, ກ້າວໜ້າ, ທັນສະໄໝ, ຍືນຍົງ ແລະ ຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປເຖິງເຂດຊົນນະບົດຫ່າງໄກສອກຫຼີກ.

**ມາດຕາ 31 (ປັບປຸງ). ແຫຼ່ງຂອງກອງທຶນ**

**ກອງທຶນພັດທະນາໂທລະຄົມມະນາຄົມ ໄດ້ມາຈາກແຫຼ່ງຕົ້ນຕໍ ດັ່ງນີ້:**

1. ງົບປະມານຂອງລັດ;
2. ການຊ່ວຍເຫຼືອຈາກຕ່າງປະເທດ ແລະ ຈາກອົງການຈັດຕັ້ງສາກົນ;
3. ການປະກອບສ່ວນຂອງບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;
4. ການຫັກເອົາຈາກຄ່າປັບໃໝຕາມລະບຽບການ;
5. ລາຍໄດ້ຈາກການເຄື່ອນໄຫວກິດຈະການໂທລະຄົມມະນາຄົມ, ຄ່ານຳໃຊ້ຊັບພະຍາກອນໂທລະຄົມ.

**ມາດຕາ 32 (ປັບປຸງ). ການຄຸ້ມຄອງ ແລະ ນຳໃຊ້ກອງທຶນ**

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນພັດທະນາໂທລະຄົມມະນາຄົມ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມຈຸດປະສົງ ທີ່ໄດ້ກຳນົດໄວ້ໃນ ມາດຕາ 30 ຂອງກົດໝາຍສະບັບນີ້ ໂດຍສອດຄ່ອງກັບລະບຽບກົດໝາຍ ກ່ຽວກັບງົບປະມານແຫ່ງລັດ.

ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງທຶນດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

# ພາກທີ VIII
# ຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 33 (ປັບປຸງ). ຄ່າທຳນຽມ**

ຄ່າທຳນຽມໂທລະຄົມມະນາຄົມ ແມ່ນ ຄ່າສິດຄຸ້ມຄອງບໍລິຫານຂອງລັດທີ່ເກັບຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຂໍອະນຸຍາດປະກອບກິດຈະການດ້ານໂທລະຄົມມະນາຄົມ, ການນຳໃຊ້

ຊັບພະຍາກອນໂທລະຄົມມະນາຄົມ, ການນຳໃຊ້ໂຄງລ່າງພື້ນຖານດ້ານໂທລະຄົມມະນາຄົມ ແລະ ການອອກໃບຢັ້ງຢືນມາດຕະຖານເຕັກນິກ.

ການເກັບ ແລະ ການມອບຄ່າທຳນຽມ ເຂົ້າງົບປະມານແຫ່ງລັດ ໃຫ້ປະຕິບັດຕາມລັດຖະບັນຍັດ ຂອງປະທານປະເທດວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 34 (ປັບປຸງ). ຄ່າບໍລິການ**

ຄ່າບໍລິການໂທລະຄົມມະນາຄົມ ແມ່ນ ຄ່າບໍລິການຮັບໃຊ້ການບໍລິຫານວິຊາການທີ່ເກັບຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຂໍອະນຸຍາດປະກອບກິດຈະການດ້ານໂທລະຄົມມະນາຄົມ, ການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ, ການນຳໃຊ້ໂຄງລ່າງພື້ນຖານດ້ານໂທລະຄົມມະນາຄົມ ແລະ ການອອກໃບຢັ້ງຢືນມາດຕະຖານເຕັກນິກ ເພື່ອຊ່ວຍໃນການໃຊ້ຈ່າຍງົບປະມານຂອງລັດ.

ການເກັບ ແລະ ການມອບຄ່າບໍລິການ ເຂົ້າງົບປະມານແຫ່ງລັດ ໃຫ້ປະຕິບັດຕາມ ລັດຖະບັນຍັດຂອງ ປະທານປະເທດວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ພາກທີ IX
## ຂໍ້ຫ້າມ

**ມາດຕາ 35 (ໃໝ່). ຂໍ້ຫ້າມສຳລັບພະນັກງານໂທລະຄົມມະນາຄົມ**

**ຫ້າມພະນັກງານໂທລະຄົມມະນາຄົມ ມີ ພຶດຕິກຳ ດັ່ງນີ້:**

1. ເປີດເຜີຍຄວາມລັບຂອງລັດ, ທາງລັດຖະການ, ກົດໜ່ວງຖ່ວງດຶງ, ປອມແປງເອກະສານ ກ່ຽວກັບໂທລະຄົມມະນາຄົມ;
2. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ບຸກຄົນ, ລວມໝູ່, ລັດ ແລະ ການຈັດຕັ້ງ;
3. ປະລະໜ້າທີ່ ແລະ ຄວາມຮັບຜິດຊອບ ທີ່ການຈັດຕັ້ງມອບໝາຍໃຫ້;
4. ດຳລົງຕຳແໜ່ງໃດໜຶ່ງ ຫຼື ເປັນທີ່ປຶກສາ ໃນທຸລະກິດດ້ານໂທລະຄົມມະນາຄົມ;
5. ດຳເນີນທຸລະກິດດ້ານໂທລະຄົມມະນາຄົມ;
6. ບັນຈຸ ສັບຊ້ອນບຸກຄົນໃນຄອບຄົວ ຍາດຕິພີ່ນ້ອງຂອງຕົນ ເຂົ້າໃນຕຳແໜ່ງບໍລິຫານໃດໜຶ່ງ ໃນທຸລະກິດດ້ານໂທລະຄົມມະນາຄົມ.

**ມາດຕາ 36 (ໃໝ່). ຂໍ້ຫ້າມສຳລັບຜູ້ໃຫ້ບໍລິການໂທລະຄົມມະນາຄົມ**

**ຫ້າມຜູ້ໃຫ້ບໍລິການດ້ານໂທລະຄົມມະນາຄົມ ມີ ພຶດຕິກຳ ດັ່ງນີ້:**

1. ເອົາໃບອະນຸຍາດດຳເນີນທຸລະກິດຂອງຕົນໃຫ້ຜູ້ອື່ນນຳໃຊ້, ເຊົ່າ ຫຼື ໂອນໃຫ້ຜູ້ອື່ນ;

2. ນໍາໃຊ້ຊັບພະຍາກອນ, ນໍາເຂົ້າອຸປະກອນ ໂທລະຄົມມະນາຄົມ ໂດຍບໍ່ໄດ້ຮັບອະນຸຍາດ;
3. ດັດປັບຄື້ນຄວາມຖີ່, ອຸປະກອນໂທລະຄົມມະນາຄົມ ແລະ ເຄືອຂ່າຍໂທລະຄົມມະນາຄົມຂອງຕົນ ເຂົ້າໃສ່ຄື້ນຄວາມຖີ່, ອຸປະກອນໂທລະຄົມມະນາຄົມ ແລະ ເຄືອຂ່າຍໂທລະຄົມມະນາຄົມ ຂອງຜູ້ໃຫ້ບໍລິການ ຫຼື ຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;
4. ສົມຮູ້ຮ່ວມຄິດກັບຜູ້ໃຫ້ບໍລິການອື່ນ ດ້ວຍຮູບການຕ່າງໆ ເພື່ອກີດກັນການແຂ່ງຂັນທີ່ເປັນທໍາ;
5. ສວຍໃຊ້ຂໍ້ມູນທີ່ໄດ້ມາຈາກຜູ້ໃຫ້ບໍລິການໂທລະຄົມມະນາຄົມອື່ນ ເພື່ອຈຸດປະສົງການແຂ່ງຂັນບໍ່ເປັນທໍາ;
6. ສວຍໃຊ້ຄວາມໄດ້ປຽບທາງດ້ານເຄືອຂ່າຍ, ສ່ວນແບ່ງຕະຫຼາດ ແລະ ໂຄງລ່າງພື້ນຖານໂທລະຄົມມະນາຄົມ ເພື່ອສະກັດກັ້ນ, ຈໍາກັດ, ກີດກັນ ແລະ ສ້າງຄວາມຫຍຸ້ງຍາກໃຫ້ແກ່ການສະໜອງການບໍລິການ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມອື່ນ;
7. ງົດ, ຕັດການບໍລິການ ໂດຍບໍ່ແຈ້ງ ຫຼື ກ່າວເຕືອນລ່ວງໜ້າ, ຍົກເວັ້ນການງົດ, ຕັດເພື່ອຄວາມໝັ້ນຄົງຂອງຊາດ;
8. ເປີດເຜີຍຄວາມລັບຂອງລັດ, ທາງລັດຖະການ ແລະ ຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມ;
9. ຂຶ້ນ ຫຼື ຫຼຸດ ຄ່າບໍລິການ ໂດຍບໍ່ໄດ້ຮັບອະນຸຍາດ ຈາກ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ແຈກຢາຍເລກໝາຍໂທລະສັບ ໂດຍບໍ່ຄິດຄ່າ;
10. ໂຄສະນາເກີນຄວາມເປັນຈິງ, ເຜີຍແຜ່ສິ່ງລາມົກອະນາຈານ, ສິ່ງເສີມການພະນັນທີ່ຜິດກົດໝາຍ;
11. ທໍາລາຍອຸປະກອນໂທລະຄົມມະນາຄົມ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມອື່ນ, ທໍາລາຍສິ່ງແວດລ້ອມ, ທິວທັດທໍາມະຊາດ ແລະ ຕິດຕັ້ງອຸປະກອນໂທລະຄົມມະນາຄົມທີ່ເປັນການກີດຂວາງການສັນຈອນ.

ມາດຕາ 37 (ໃໝ່). **ຂໍ້ຫ້າມສໍາລັບຜູ້ໃຊ້ບໍລິການໂທລະຄົມມະນາຄົມ**

**ຫ້າມຜູ້ໃຊ້ບໍລິການດ້ານໂທລະຄົມມະນາຄົມ ມີ ພຶດຕິກໍາ ດັ່ງນີ້:**

1. ໃຊ້ການສື່ສານ ເພື່ອທໍາລາຍຄວາມໝັ້ນຄົງ, ຄວາມສະຫງົບ, ການພັດທະນາເສດຖະກິດ-ສັງຄົມ ແລະ ວັດທະນະທໍາຂອງຊາດ;
2. ນໍາໃຊ້ຊັບພະຍາກອນ, ນໍາເຂົ້າອຸປະກອນ ໂທລະຄົມມະນາຄົມ ໂດຍບໍ່ໄດ້ຮັບອະນຸຍາດ;

3. ໃຊ້ການສື່ສານ ເພື່ອສ້າງຄວາມເສື່ອມເສຍແກ່ກຽດສັກສີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
4. ໃຊ້ອຸປະກອນໂທລະຄົມມະນາຄົມຂອງຕົນ ເພື່ອລົບກວນ, ທຳລາຍ, ລັກຕໍ່, ລັກຟັງ ແລະ ກັ່ນກອງ ເອົາຂໍ້ມູນຂ່າວສານ ຂອງຜູ້ອື່ນ;
5. ທຳລາຍອຸປະກອນໂທລະຄົມມະນາຄົມ.

**ມາດຕາ 38 (ໃໝ່). ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

**ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີ ພຶດຕິກຳ ດັ່ງນີ້:**

1. ດຳເນີນກິດຈະການໂທລະຄົມມະນາຄົມປະເພດຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ;
2. ນຳໃຊ້ຊັບພະຍາກອນ, ນຳເຂົ້າອຸປະກອນ ໂທລະຄົມມະນາຄົມ ໂດຍບໍ່ໄດ້ຮັບອະນຸຍາດ;
3. ທຳລາຍອຸປະກອນໂທລະຄົມມະນາຄົມ ເຊັ່ນ ສາຍໂທລະສັບ, ຕູ້ໂທລະສັບ, ສາຍອາກາດ, ເສົາເນັ່ງສາຍ, ເສົາອັງແຕນ ແລະ ອື່ນໆ;
4. ໃຊ້ຄວາມຮຸນແຮງ, ນາບຂູ່, ຂັດຂວາງ ການປະຕິບັດໜ້າທີ່ ຂອງພະນັກງານໂທລະຄົມມະນາຄົມ ຫຼື ຜູ້ໃຫ້ບໍລິການໂທລະຄົມມະນາຄົມ.

# ພາກທີ X
# ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 39 (ໃໝ່). ຮູບການແກ້ໄຂຂໍ້ຂັດແຍ່ງ**

**ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບວຽກງານໂທລະຄົມມະນາຄົມ ດຳເນີນດ້ວຍຮູບການ ດັ່ງນີ້:**

1. ການແກ້ໄຂດ້ວຍການປະນີປະນອມກັນ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານ.

**ມາດຕາ 40 (ໃໝ່). ການແກ້ໄຂດ້ວຍການປະນີປະນອມກັນ**

ໃນກໍລະນີ ມີຂໍ້ຂັດແຍ່ງເກີດຂຶ້ນ ຄູ່ກໍລະນີ ຕ້ອງພະຍາຍາມແກ້ໄຂຂໍ້ຂັດແຍ່ງນັ້ນ ດ້ວຍການປຶກສາຫາລື ແລະ ປະນີປະນອມກັນ ເພື່ອໃຫ້ຕ່າງຝ່າຍ ຕ່າງໄດ້ຮັບຜົນປະໂຫຍດ.

**ມາດຕາ 41 (ປັບປຸງ). ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີ ເກີດຂໍ້ຂັດແຍ່ງທີ່ບໍ່ສາມາດຕົກລົງກັນ ຫຼື ບໍ່ສາມາດໄກ່ເກ່ຍກັນໄດ້ ຄູ່ກໍລະນີມີສິດຮ້ອງຂໍ ໃຫ້ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ພິຈາລະນາແກ້ໄຂທາງດ້ານບໍລິຫານ ຕາມລະບຽບການ.

**ມາດຕາ 42 (ໃໝ່). ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ເມື່ອຄູ່ກໍລະນີ ບໍ່ສາມາດປະນີປະນອມກັນ ຫຼື ບໍ່ສາມາດແກ້ໄຂທາງດ້ານບໍລິຫານໄດ້ແລ້ວ ກໍມີສິດຮ້ອງຂໍໃຫ້ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂ ຕາມລະບຽບກົດໝາຍ ບົນພື້ນຖານຕົກລົງເຫັນດີນຳກັນ.

**ມາດຕາ 43 (ໃໝ່). ການຮ້ອງຟ້ອງຕໍ່ສານ**

ເມື່ອຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ຫາກເຫັນວ່າຕົນຍັງບໍ່ໄດ້ຮັບຄວາມຍຸຕິທຳໃນການແກ້ໄຂຂໍ້ຂັດແຍ່ງ ຈາກຂະແໜງການທີ່ກ່ຽວຂ້ອງ ກໍມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອທຳການພິຈາລະນາຕັດສິນ ຕາມລະບຽບກົດໝາຍ.

ສຳລັບຂໍ້ຂັດແຍ່ງ ທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມວິທີການແກ້ໄຂຂໍ້ຂັດແຍ່ງ ທີ່ໄດ້ກຳນົດໄວ້ໃນສັນຍາ ຫຼື ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ XI

## ການຄຸ້ມຄອງ ແລະ ກວດກາໂທລະຄົມມະນາຄົມ

### ໝວດທີ 1

### ການຄຸ້ມຄອງໂທລະຄົມມະນາຄົມ

**ມາດຕາ 44 (ປັບປຸງ). ອົງການຄຸ້ມຄອງໂທລະຄົມມະນາຄົມ**

ລັດ ເປັນຜູ້ຄຸ້ມຄອງໂທລະຄົມມະນາຄົມຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນເຈົ້າການຄຸ້ມຄອງ ໂດຍປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕາມພາລະບົດບາດຂອງຕົນ.

**ອົງການຄຸ້ມຄອງໂທລະຄົມມະນາຄົມ ປະກອບດ້ວຍ:**

1. ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
2. ພະແນກ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນ;
3. ຫ້ອງການ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເມືອງ, ເທດສະບານ.

**ມາດຕາ 45 (ໃໝ່). ການຄວບຄຸມດ້ານໂທລະຄົມມະນາຄົມ**

**ເພື່ອຮັບປະກັນຄວາມປອດໄພຂອງສາທາລະນະ ແລະ ຄວາມໝັ້ນຄົງຂອງຊາດ ລັດຖະບານເປັນຜູ້ຕົກລົງ ແລະ ມອບໝາຍໃຫ້ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ປະສານສົມທົບກັບ ກະຊວງ ປ້ອງກັນປະເທດ ແລະ ກະຊວງ ປ້ອງກັນຄວາມສະຫງົບ ດຳເນີນການ ດັ່ງນີ້:**

1. ຄວບຄຸມເຄືອຂ່າຍ ແລະ ການບໍລິການໂທລະຄົມມະນາຄົມ ເປັນການຊົ່ວຄາວ ຂອງໄລຍະເວລາທີ່ເກີດເຫດການ;
2. ກວດສອບການສື່ສານຂອງບຸກຄົນໃດໜຶ່ງ ທີ່ສົງໄສວ່າມີການພົວພັນເຖິງການກໍ່ຄວາມບໍ່ສະຫງົບ ແລະ ຄວາມປອດໄພຂອງສັງຄົມ;
3. ຄວບຄຸມ ແລະ ຍຶດອຸປະກອນໂທລະຄົມມະນາຄົມຂອງຜູ້ໃຊ້ບໍລິການທີ່ພົວພັນເຖິງການກໍ່ຄວາມບໍ່ສະຫງົບ ແລະ ຄວາມປອດໄພຂອງສັງຄົມ ພ້ອມທັງດຳເນີນຄະດີຕາມກົດໝາຍ.

**ມາດຕາ 46 (ປັບປຸງ). ສິດ ແລະ ໜ້າທີ່ ຂອງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ**

**ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ກຳນົດນະໂຍບາຍ, ແຜນຍຸດທະສາດ, ແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບການພັດທະນາໂທລະຄົມມະນາຄົມ ເພື່ອນຳສະເໜີລັດຖະບານ ພິຈາລະນາຮັບຮອງເອົາ;
2. ສ້າງ ແລະ ປັບປຸງ ລະບຽບກົດໝາຍ ກ່ຽວກັບວຽກງານໂທລະຄົມມະນາຄົມ ພ້ອມທັງໂຄສະນາ, ເຜີຍແຜ່, ຊີ້ນຳ ແລະ ຕິດຕາມ ໃນການຈັດຕັ້ງປະຕິບັດ;
3. ອະນຸຍາດ, ສືບຕໍ່, ຕິດຕາມ, ໂຈະ, ຖອນ ແລະ ຍົກເລີກ ກິດຈະການໂທລະຄົມມະນາຄົມ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ;
4. ອະນຸຍາດໃຫ້ນຳໃຊ້ຊັບພະຍາກອນ ໂທລະຄົມມະນາຄົມ;
5. ນຳເຂົ້າອຸປະກອນໂທລະຄົມມະນາຄົມ;
6. ອະນຸຍາດໃຫ້ຜູ້ປະກອບການ ເຊື່ອມຕໍ່ອຸປະກອນ ແລະ ເຄືອຂ່າຍໂທລະຄົມມະນາຄົມຂອງຕົນ ເຂົ້າໃສ່ອຸປະກອນ ແລະ ເຄືອຂ່າຍໂທລະຄົມມະນາຄົມຂອງຜູ້ໃຫ້ບໍລິການ ຫຼື ຂອງຜູ້ໃຊ້ບໍລິການໂທລະຄົມມະນາຄົມອື່ນ;
7. ພັດທະນາບຸກຄະລາກອນດ້ານໂທລະຄົມມະນາຄົມ;
8. ແກ້ໄຂຄຳສະເໜີຂອງຜູ້ໃຊ້ ແລະ ຜູ້ໃຫ້ບໍລິການ ກ່ຽວກັບຄຸນນະພາບ, ມາດຕະຖານຂອງການບໍລິການ ໂທລະຄົມມະນາຄົມ;

9. ຄຸ້ມຄອງ, ບໍລິຫານ, ຈັດສັນ, ແບ່ງປັນ ແລະ ເກັບຄືນ ຊັບພະຍາກອນໂທລະຄົມມະນາຄົມ;
10. ເກັບຄ່າທຳນຽມ ແລະ ຄ່າບໍລິການ ດ້ານໂທລະຄົມມະນາຄົມ;
11. ກວດກາ ແລະ ວັດແທກ ຄື້ນຄວາມຖີ່ ຢູ່ ສປປ ລາວ;
12. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງກຳນົດອັດຕາຄ່າທຳນຽມ ແລະ ຄ່າບໍລິການ ຂອງການນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ແລະ ຄ່າບໍລິການໂທລະຄົມມະນາຄົມ;
13. ກຳນົດມາດຕະຖານເຕັກນິກ ກ່ຽວກັບອຸປະກອນໂທລະຄົມມະນາຄົມ ຢູ່ພາຍໃນປະເທດ;
14. ພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານໂທລະຄົມມະນາຄົມ;
15. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານຂອງຕົນຕໍ່ລັດຖະບານ ຢ່າງເປັນປົກກະຕິ.

ນອກຈາກສິດ ແລະ ໜ້າທີ່ ທີ່ກ່າວມາຂ້າງເທິງນີ້ແລ້ວ ເພື່ອຮັບປະກັນຄວາມປອດໄພຂອງສາທາລະນະ ແລະ ຄວາມໝັ້ນຄົງຂອງຊາດ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສາມາດ:

- ຄວບຄຸມເຄືອຂ່າຍ ແລະ ການບໍລິການໂທລະຄົມມະນາຄົມ ເປັນການຊົ່ວຄາວ ຂອງໄລຍະເວລາ ທີ່ເກີດເຫດການ;
- ກວດສອບການສື່ສານຂອງບຸກຄົນໃດໜຶ່ງ ທີ່ສົງໄສວ່າມີການພົວພັນເຖິງການກໍ່ຄວາມບໍ່ສະຫງົບ ແລະ ຄວາມປອດໄພຂອງສັງຄົມ;
- ຄວບຄຸມ ແລະ ຍຶດອຸປະກອນໂທລະຄົມມະນາຄົມຂອງຜູ້ໃຊ້ບໍລິການທີ່ພົວພັນເຖິງການກໍ່ຄວາມບໍ່ສະຫງົບ ແລະຄວາມປອດໄພຂອງສັງຄົມ ພ້ອມທັງດຳເນີນຄະດີຕາມກົດໝາຍ.

**ມາດຕາ 47 (ປັບປຸງ). ສິດ ແລະ ໜ້າທີ່ ຂອງ ພະແນກ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນ**

**ພະແນກ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຫັນເອົານະໂຍບາຍ, ແຜນການ ແລະ ຂໍ້ຕົກລົງຂອງກະຊວງມາເປັນ ແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ແລະ ຈັດຕັ້ງປະຕິບັດ;
2. ຊີ້ນຳຫ້ອງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເມືອງ, ເທດສະບານ ກ່ຽວກັບວຽກງານໂທລະຄົມມະນາຄົມ;
3. ອະນຸຍາດ, ສືບຕໍ່, ໂຈະ, ຖອນ ແລະ ຍົກເລີກ ກິດຈະການໂທລະຄົມມະນາຄົມປະເພດຕ່າງໆ ຕາມຂອບເຂດສິດຂອງຕົນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;
4. ແກ້ໄຂຄຳສະເໜີຂອງຜູ້ໃຊ້ ແລະ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ກ່ຽວກັບຄຸນນະພາບ, ມາດຕະຖານເຕັກນິກ, ຄ່າບໍລິການ ແລະ ຄຳສະເໜີອື່ນ ພາຍໃນທ້ອງຖິ່ນຂອງຕົນ;
5. ເກັບຄ່າທຳນຽມ ແລະ ຄ່າບໍລິການດ້ານໂທລະຄົມມະນາຄົມປະເພດຕ່າງໆ ພາຍໃນທ້ອງຖິ່ນຂອງຕົນ;
6. ເກັບກຳຂໍ້ມູນສະຖິຕິຂອງຜູ້ໃຊ້ບໍລິການ ແລະ ຜູ້ໃຫ້ບໍລິການໂທລະຄົມມະນາຄົມປະເພດຕ່າງໆ ພາຍໃນທ້ອງຖິ່ນຂອງຕົນ;
7. ຕິດຕາມ ການປະກອບກິດຈະການໂທລະຄົມມະນາຄົມ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມປະເພດຕ່າງໆ ພາຍໃນທ້ອງຖິ່ນຂອງຕົນ;
8. ປະສານສົມທົບກັບອົງການປົກຄອງແຂວງ, ນະຄອນ ໃນການຄຸ້ມຄອງວຽກງານໂທລະຄົມມະນາຄົມ;
9. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;
10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນຕໍ່ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ, ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 48 (ປັບປຸງ). ສິດ ແລະ ໜ້າທີ່ ຂອງຫ້ອງການ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເມືອງ, ເທດສະບານ**

**ຫ້ອງການ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານໂທລະຄົມມະນາຄົມ ທີ່ພະແນກ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນ ວາງອອກ;
2. ຕິດຕາມ ການບໍລິການໂທລະຄົມມະນາຄົມປະເພດຕ່າງໆ ພາຍໃນເມືອງ, ເທດສະບານ ຂອງຕົນ;
3. ນຳສົ່ງຄຳສະເໜີຂອງຜູ້ໃຊ້ບໍລິການ ແລະ ຜູ້ໃຫ້ບໍລິການ ກ່ຽວກັບຄຸນນະພາບ, ມາດຕະຖານ ເຕັກນິກ, ຄ່າບໍລິການ ແລະ ຄຳສະເໜີອື່ນ ໃຫ້ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນ;
4. ເກັບກຳຂໍ້ມູນສະຖິຕິ ຂອງຜູ້ໃຊ້ບໍລິການ ແລະ ຜູ້ໃຫ້ບໍລິການໂທລະຄົມມະນາຄົມປະເພດ ຕ່າງໆ ພາຍໃນທ້ອງຖິ່ນຂອງຕົນ;
5. ນຳສົ່ງການສະເໜີຂໍອະນຸຍາດ, ສືບຕໍ່, ໂຈະ, ຖອນ ແລະ ຍົກເລີກ ກິດຈະການໂທລະຄົມ ມະນາຄົມ ປະເພດຕ່າງໆ ໃຫ້ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ, ນະຄອນ;
6. ປະສານສົມທົບກັບອົງການປົກຄອງເມືອງ, ເທດສະບານ ໃນການຄຸ້ມຄອງວຽກງານໂທລະ ຄົມມະນາຄົມ;
7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຂອງຕົນຕໍ່ ພະແນກໄປສະນີ, ໂທລະ ຄົມມະນາຄົມ ແລະ ການສື່ສານ, ອົງການປົກຄອງເມືອງ, ເທດສະບານ ຢ່າງເປັນປົກກະຕິ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 2
## ການກວດກາໂທລະຄົມມະນາຄົມ

**ມາດຕາ 49 (ໃໝ່). ອົງການກວດກາວຽກງານໂທລະຄົມມະນາຄົມ**

ອົງການກວດກາວຽກງານໂທລະຄົມມະນາຄົມ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງໂທລະຄົມມະນາຄົມ ທີ່ໄດ້ກຳນົດໄວ້ໃນ ມາດຕາ 44 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ, ອົງການກວດສອບແຫ່ງລັດ.

**ມາດຕາ 50 (ປັບປຸງ). ເນື້ອໃນການກວດກາ**

ການກວດກາໂທລະຄົມມະນາຄົມ ມີ ເນື້ອໃນ ດັ່ງນີ້:

1. ກວດກາ ການວາງແຜນ, ການອະນຸຍາດດຳເນີນທຸລະກິດ, ການສຳຫຼວດ, ການອອກແບບກໍ່ສ້າງ ແລະ ຕິດຕັ້ງເຄືອຂ່າຍໂທລະຄົມມະນາຄົມ;
2. ກວດກາ ມາດຕະຖານຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມ ໃນການກໍ່ສ້າງ ແລະ ການຕິດຕັ້ງເຄືອຂ່າຍໂທລະຄົມມະນາຄົມ;
3. ກວດກາ ມາດຕະຖານເຕັກນິກ ຕາມເຕັກໂນໂລຊີ ຂອງອຸປະກອນໂທລະຄົມມະນາຄົມ;
4. ກວດກາ ການນຳໃຊ້ຊັບພະຍາກອນ, ການນຳເຂົ້າອຸປະກອນ ໂທລະຄົມມະນາຄົມ;
5. ປະສານສົມທົບກັບກະຊວງການເງິນ ກວດກາລະບົບບັນຊີການເງິນ;
6. ກວດກາ ການປະມູນ, ສັນຍາຮັບເໝົາກໍ່ສ້າງ ແລະ ການຕິດຕັ້ງເຄືອຂ່າຍໂທລະຄົມມະນາຄົມ, ການປະຕິບັດສັນຍາຕ່າງໆ;
7. ກວດກາ ການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 51. ຮູບການກວດກາ**

**ການກວດກາໂທລະຄົມມະນາຄົມ ມີ ສາມ ຮູບການ ດັ່ງນີ້:**

1. ການກວດກາຢ່າງເປັນລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຢ່າງເປັນລະບົບປົກກະຕິ ແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາຢ່າງແນ່ນອນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ທີ່ຈະຖືກກວດກາຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ທີ່ຈະຖືກກວດກາ ຊາບລ່ວງໜ້າ.

ໃນການດຳເນີນການກວດກາໂທລະຄົມມະນາຄົມ ເຈົ້າໜ້າທີ່ຂອງອົງການກວດກາ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍ ຢ່າງເຂັ້ມງວດ.

## ພາກທີ XII
## ວັນໂທລະຄົມມະນາຄົມ, ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ

**ມາດຕາ 52 (ໃໝ່). ວັນໂທລະຄົມມະນາຄົມ**

ສປປ ລາວ ຖືເອົາວັນທີ 13 ມີນາ ເປັນວັນໂທລະຄົມມະນາຄົມ ແຫ່ງຊາດ. ແຕ່ລະປີຢູ່ສູນກາງ ແລະ ທ້ອງຖິ່ນ ຕ້ອງຈັດສະເຫຼີມສະຫຼອງວັນດັ່ງກ່າວ ດ້ວຍຮູບການທີ່ເໝາະສົມ.

**ມາດຕາ 53 (ໃໝ່). ເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີເຄື່ອງໝາຍ, ເຄື່ອງແບບ ແລະ ຕາປະທັບ ທີ່ໄດ້ຮັບອະນຸມັດ ຈາກລັດຖະບານ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

# ພາກທີ XIII
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 54. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການລົງທຶນກໍ່ສ້າງ, ພັດທະນາໂທລະຄົມມະນາຄົມ, ຂະຫຍາຍເຄືອຂ່າຍ, ຜະລິດອຸປະກອນ ແລະ ບໍລິການໂທລະຄົມມະນາຄົມ ຢ່າງມີປະສິດທິຜົນ, ມີຄວາມກ້າວໜ້າ, ທັນສະໄໝ, ມີຄຸນນະພາບສູງ ລ້ວນແຕ່ຈະໄດ້ຮັບ ການຍ້ອງຍໍ ແລະ ການປະຕິບັດນະໂຍບາຍ ຕາມລະບຽບການ.

**ມາດຕາ 55. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດບົດບັນຍັດໃດໜຶ່ງ ຂອງກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ປັບໃໝ ຫຼື ຖືກລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ລວມທັງໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 56. ມາດຕະການສຶກສາອົບຮົມ**

**ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດບົດບັນຍັດໃດໜຶ່ງ ຂອງກົດໝາຍສະບັບນີ້ ໃນສະຖານເບົາ ຈະຖືກສຶກສາອົບຮົມ ເຊັ່ນ:**

1. ຜູ້ໃຫ້ບໍລິການ ບໍ່ແກ້ໄຂຂໍ້ຂັດແຍ່ງທາງດ້ານເຕັກນິກໃນການຕິດຕັ້ງ, ການສ້ອມແປງ ຫຼື ການບໍລິການ ໂທລະຄົມມະນາຄົມປະເພດຕ່າງໆ ຢ່າງທັນການ ແລະ ຖືກຕ້ອງຕາມມາດຕະຖານເຕັກນິກ;
2. ຜູ້ໃຊ້ບໍລິການ ບໍ່ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ຕາມປົກກະຕິ ແລະ ອື່ນໆ.

**ມາດຕາ 57 (ປັບປຸງ). ມາດຕະການປັບໃໝ**

**ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດບົດບັນຍັດໃດໜຶ່ງ ຂອງກົດໝາຍສະບັບນີ້ ຈະຖືກປັບໃໝ ເຊັ່ນ:**

1. ດຳເນີນກິດຈະການໂທລະຄົມມະນາຄົມປະເພດຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດ;

2. ປະກອບການບໍລິການໂທລະຄົມມະນາຄົມ ນອກເໜືອຈາກລາຍການ ແລະ ຂອບເຂດທີ່ໄດ້ຮັບອະນຸຍາດ;
3. ເອົາໃບອະນຸຍາດທີ່ຕົນໄດ້ຮັບ ໃຫ້ຜູ້ອື່ນນຳໃຊ້, ໃຫ້ເຊົ່າ ຫຼື ໂອນໃຫ້ຜູ້ອື່ນ;
4. ນຳໃຊ້ຊັບພະຍາກອນ, ນຳເຂົ້າອຸປະກອນ ໂທລະຄົມມະນາຄົມ ໂດຍບໍ່ໄດ້ຮັບອະນຸຍາດ;
5. ທຳລາຍອຸປະກອນໂທລະຄົມມະນາຄົມ ເຊັ່ນ ສາຍໂທລະສັບ, ຕູ້ໂທລະສັບ, ເສົາອາກາດ, ເສົາເນັ່ງສາຍ, ເສົາອັງແຕນ.

ອັດຕາປັບໃໝໃນແຕ່ລະກໍລະນີ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 58 (ໃໝ່). ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສັຍຫາຍໃຫ້ແກ່ລັດ, ລວມໝູ່ ຫຼື ບຸກຄົນອື່ນ ຕ້ອງໃຊ້ແທນຄ່າເສັຍຫາຍ ຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 59 (ປັບປຸງ). ມາດຕະການທາງອາຍາ**

ບຸກຄົນ ທີ່ໄດ້ລະເມີດບົດບັນຍັດໃດໜຶ່ງຂອງກົດໝາຍສະບັບນີ້ ທີ່ເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມກົດໝາຍອາຍາ.

ບຸກຄົນ ທີ່ໄດ້ດັດປັບຄື້ນຄວາມຖີ່ ຫຼື ນຳໃຊ້ອຸປະກອນ, ເຄືອຂ່າຍໂທລະຄົມມະນາຄົມຂອງຕົນ ເຂົ້າໃສ່ຄື້ນຄວາມຖີ່ ຫຼື ອຸປະກອນ, ເຄືອຂ່າຍໂທລະຄົມມະນາຄົມຂອງຜູ້ອື່ນ ເພື່ອສະກັດກັ້ນ, ລົບກວນ, ບຸກລຸກ, ທຳລາຍ, ປ່ຽນແປງ, ລຶບ, ລັກຕໍ່, ລັກຟັງ, ລັກ ຫຼື ກັ່ນກອງເອົາຂໍ້ມູນຂ່າວສານ ຂອງຜູ້ອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມ ເດືອນ ຫາ ຫົກ ເດືອນ ແລະ ຈະຖືກປັບໃໝແຕ່ 500.000 ກີບ ຫາ 5.000.000 ກີບ.

ໃນກໍລະນີ ທີ່ມີການກະທຳຜິດຕາມວັກທີ ສອງ ຂອງມາດຕານີ້ ເປັນອາຈິນ, ບໍ່ເຂັດຫຼາບ, ຈັດຕັ້ງເປັນກຸ່ມ ກໍຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງ ປີ ຫາ ສາມ ປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

## ພາກທີ XIV

## ບົດບັນຍັດສຸດທ້າຍ

**ມາດຕາ 60. ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 61. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ສາມສິບ ວັນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດປະກາດໃຊ້ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ ສະບັບເລກທີ 02/ສພຊ ລົງວັນທີ 10 ເມສາ 2001.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້